ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 214013-14

9131
ເລກທີ /ກອຢ
ນະຄອນຫຼວງວຽງຈັນ, ວັນທີ 23 NOV 2023

**ໜັງສືແຈ້ງການ**

**ຮຽນ:** ທ່ານ ຫົວໜ້າ ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ບໍລິສັດ, ຮ້ານຄ້າ ແລະ ປະຊາຊົນໃນທົ່ວປະເທດ.

**ເລື່ອງ:** ຫ້າມບໍລິໂພກ ແລະ ຈຳໜ່າຍ ຜະລິດຕະພັນອາຫານເສີມຜິດກົດໝາຍ 11 ລາຍການ.

- ອີງຕາມ ກົດໝາຍວ່າດ້ວຍອາຫານ, ສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013.
- ອີງຕາມ ການແຈ້ງເຕືອນ ຂອງ ສຳນັກງານຄະນະກຳມະການອາຫານ ແລະ ຢາ ແຫ່ງລາຊະອານາຈັກໄທ , ສະບັບລົງວັນທີ 19 ພະຈິກ 2022.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ຜະລິດຕະພັນນົມ ແລະ ອາຫານເສີມ OVISURE GOLD, Digo sure, Zextra Sure, Via Sure, Canxi Hevisure gold, GluOats, Gluzextra Gold, HIUP COMPLETE, Sica sure canxi wemee, Pro up, Hevifood Body fit ຜະລິດຕະພັນດັ່ງກ່າວ ແມ່ນມີການກ່າວອ້າງ ແລະ ໂຄສະນາ ສັບພະຄຸນເກີນຄວາມຈິງ, ບໍ່ໄດ້ຂຶ້ນທະບຽນ, ບໍ່ໄດ້ຮັບອະນຸຍາດນຳເຂົ້າ ແລະ ບໍ່ໄດ້ຮັບອະນຸຍາດໂຄສະນາ ນຳກົມອາຫານ ແລະ ຢາ.

ດັ່ງນັ້ນ, ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງທ່ານ ຫ້າມບໍລິໂພກ ແລະ ຈຳໜ່າຍຜະລິດຕະພັນດັ່ງກ່າວ, ຖ້າຫາກເຈົ້າໜ້າທີ່ອາຫານ ແລະ ຢາ ກວດພົບເຫັນຜະລິດຕະພັນດັ່ງກ່າວ ແມ່ນຈະໄດ້ອາຍັດ, ຢຶດ ແລະ ຖືກປະຕິບັດມາດຕະການ ຕາມກົດໝາຍອາຫານ.

ເພື່ອສືບຕໍ່ຕິດຕາມກວດກາສະພາບການຈໍລະຈອນຜະລິດຕະພັນດັ່ງກ່າວ ກົມອາຫານ ແລະ ຢາ ສະເໜີໃຫ້ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ຊີ້ນຳຂະແໜງອາຫານ ແລະ ຢາ ແຂວງ, ນະຄອນຫຼວງ ຕິດຕາມກວດກາຢູ່ດ່ານນຳເຂົ້າ ແລະ ໃນທ້ອງຕະຫຼາດໃຫ້ທົ່ວເຖິງ, ເຂັ້ມງວດ ແລະ ລາຍງານມາຍັງກົມອາຫານ ແລະ ຢາ ເພື່ອຊາບ ແລະ ຊອກວິທີທາງແກ້ໄຂ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ໃຫ້ຄວາມຮ່ວມມືຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ຫົວໜ້າກົມ

ກະຊວງສາທາລະນະສຸກ ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວຫາວົງ